PLAN INTERNATIONAL

Until we are all equal

# ຮັບສະໝັກພະນັກງານ

ອົງການແພລນສາກົນ ແມ່ນອົງການຈັດຕັ້ງສາກົນທີ່ຊ່ວຍເຫຼືອດ້ານມະນຸດສະທຳ ແລະ ການພັດທະນາ ໂດຍເນັ້ນໜັກໃສ່ການເສີມສ້າງຄວາມກ້າວໜ້າດ້ານສິດທິເດັກນ້ອຍ ແລະ ຄວາມເທົ່າທຽມດ້ານບົດບາດຍິງ-ຊາຍ, ປະຈຸບັນພວກເຮົາເຮັດວຽກຢູ່ 04 ແຂວງ: ນະຄອນຫຼວງວຽງຈັນ, ບໍ່ແກ້ວ, ອຸດົມໄຊ ແລະ ສາລະວັນ ໃນຂະແໜງການສາທາລະນະສຸກ, ການສຶກສາ, ການພັດທະນາໄວໜຸ່ມ ແລະ ພັດທະນາຊີວິດການເປັນຢູ່.

❖ **ຕຳແໜ່ງ: ພະນັກງານຂັບລົດ, 2 ຕຳແໜ່ງ** (ປະຈຳຢູ່ ເມືອງ ຫ້ວຍຊາຍ, ແຂວງ ບໍ່ແກ້ວ)

➢ **ໜ້າທີ່ຮັບຜິດຊອບຫຼັກ:**

- ກວດກາສະພາບລົດໃຫ້ມີຄວາມພ້ອມ (ສະອາດ ແລະ ເປັນລະບຽບຮຽບຮ້ອຍ) ພ້ອມໃຊ້ງານ.
- ກວດກາອຸປະກອນຕ່າງໆເຊັ່ນ: ຊຸດປະຖົມພະຍາບານເບື້ອງຕົ້ນ ແລະ ເຄື່ອງມືຕ່າງໆທີ່ຈຳເປັນກ່ອນອອກເດີນທາງ.
- ດູແລຜູ້ໂດຍສານທຸກຄົນໃຫ້ປະຕິບັດຕາມຄຳແນະນຳຄວາມປອດໄພການນຳໃຊ້ຍານພະຫະນະຂອງອົງການ.
- ຮັບຜິດຊອບໃນການບັນທຶກຂໍ້ມູນ ກ່ຽວກັບການນຳໃຊ້ລົດ, ກວດກາລົດປະຈຳວັນ ແລະ ການເຕີມນ້ຳມັນລົດເປັນປະຈຳ.
- ໃຫ້ຄຳປຶກສາຫາລືກັບທີມງານກ່ຽວກັບບັນຫາທາງດ້ານເຕັກນິກພາຫະນະ ແລະ ກວດກາສະພາບລົດໃຫຍ່ ແລະ ລົດຈັກໃຫ້ພ້ອມໃຊ້ງານ.
- ສະໜັບສະໜູນວຽກງານບໍລິຫານເຊັ່ນ: ຮັບ/ສົ່ງ ເອກະສານ, ຈັດສົ່ງເຄື່ອງລົງພາກສະໜາມ, ຊ່ວຍວຽກທົ່ວໄປພາຍໃນຫ້ອງການ.
- ສະໜັບສະໜູນວຽກງານອື່ນໆຕາມການມອບໝາຍຈາກຫົວໜ້າສາຍງານ.

➢ **ເງື່ອນໄຂຂອງຜູ້ສະໝັກ:**

- ລະດັບການສຶກສາ ມັດທະຍົມຕອນປາຍຂຶ້ນໄປ.
- ມີໃບຂັບຂີ່ລົດໃຫຍ່ ແລະ ປະສົບການໃນການຂັບລົດ 2-3 ປີ ໃນສະພາບເສັ້ນທາງທີ່ຫຍຸ້ງຫຍາກໃນເຂດທ້ອງຖິ່ນ.
- ມີຄວາມຮູ້ ແລະ ທັກສະໃນການສ້ອມແປງລົດຂັ້ນພື້ນຖານ.
- ມີຄວາມຫ້າວຫັນ, ມີວິໄນ ແລະ ອົດທົນຕໍ່ໜ້າທີ່ວຽກງານ.
- ສາມາດສື່ສານ ພາສາອັງກິດໄດ້ເລັກນ້ອຍ.
- ສາມາດເຮັດວຽກໃນວັນພັກ ເສົາ ແລະ ອາທິດ ຫຼື ວັນພັກລັດຖະການໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກ.
- ມີຄວາມຮັບຜິດຊອບສູງ ແລະ ຮັກໃນອາຊີບການໃຫ້ການບໍລິການລົດຮັບສົ່ງ.

➢ **ທຸກໆຕຳແໜ່ງຂອງອົງການແພລນແມ່ນ:**

- ມີຄວາມມຸ້ງໝັ້ນທາງດ້ານຄວາມສະເໝີພາບທາງດ້ານສິດທິ ແລະ ການມີສ່ວນຮ່ວມຂອງເດັກຍິງ ແລະ ແມ່ຍິງ.
- ມີຄວາມມຸ້ງໝັ້ນທາງດ້ານສິດທິເດັກ.
- ອົງການແພລນຈະບໍ່ຍອມໃຫ້ມີການທາລຸນເດັກ. ຜູ້ທີ່ຖືກຄັດເລືອກເປັນພະນັກງານຂອງອົງການແພລນຈະຕ້ອງໄດ້ປະຕິບັດນະໂຍບາຍດ້ານການປົກປ້ອງເດັກເຊິ່ງລວມທັງການກວດສອບປະຫວັດການເຮັດວຽກຜ່ານມາ.

**ເອກະສານປະກອບໃນການສະໝັກ:**

- ໜັງສືສະເໜີຂໍສະໝັກງານ
- ຊີວະປະຫວັດຜູ້ສະໝັກ
- ກັອບປີ້ໃບປະກາດ, ໃບຄະແນນ, ໃບຜ່ານງານ
- ກັອບປີ້ປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ ແລະ ໃບຂັບຂີ່.

**ບ່ອນສົ່ງເອກະສານສະໝັກງານ:**

ອົງການແພລນ ສາກົນ ປະຈຳ ສປປ ລາວ
ຫ້ອງການປະຈຳແຂວງບໍ່ແກ້ວ, ບ້ານ ອຸດົມ, ເມືອງ ຫ້ວຍຊາຍ, ແຂວງ ບໍ່ແກ້ວ, ເບີໂທລະສັບ: 084 212 119, 084 212 164 ຫຼື ອີເມວ: PlanLaos.JobVacancies@plan-international.org

**ປິດຮັບສະໝັກວັນທີ: 28 ພະຈິກ 2024**

ມີພຽງຜູ້ທີ່ຖືກຄັດເລືອກ ເຂົ້າສຳພາດເທົ່ານັ້ນຈະໄດ້ຮັບການຕິດຕໍ່ຫາເພື່ອການນັດໝາຍໃນການສຳພາດ.